ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ

ເລກທີ ............./ຫຄຊກລ
ນະຄອນຫລວງວຽງຈັນ, ວັນທີ:.....03 NOV 2020.......

# ບົດບັນທຶກກອງປະຊຸມວິຊາການ

## ກອງປະຊຸມປຶກສາຫາລືກ່ຽວການປະສານງານ, ການແລກປ່ຽນຂໍ້ມູນຂ່າວສານວຽກການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ເພື່ອເປັນບ່ອນອີງໃນການຮ່າງແຜນຍຸດທະສາດການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ 2021-2025 ໃນວັນທີ 26 ຕຸລາ 2020 ທີ່ຫ້ອງການ ຄຊກລ.

**ຮຽນ:** ທ່ານ ຫົວໜ້າຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ ທີ່ນັບຖື.

**ເລື່ອງ:** ຜົນສຳເລັດໃນການເປີດກອງປະຊຸມວິຊາ ການປຶກສາຫາລືກ່ຽວການປະສານງານ, ການແລກປ່ຽນຂໍ້ມູນຂ່າວສານວຽກການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ເພື່ອເປັນບ່ອນອີງໃນການຮ່າງແຜນຍຸດທະສາດການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ 2021-2025 ໃນວັນທີ 26 ຕຸລາ 2020 ທີ່ຫ້ອງປະຊຸມຫ້ອງການ ຄຊກລ.

- ອີງຕາມ ໜັງສືສະເໜີ ຂອງໜ່ວຍງານຊ່ວຍເຫຼືອຜູ້ຖືກຮ້າຍຈາກ ລບຕ ສະບັບເລກທີ 645/ຫຄຊກລ, ລົງວັນທີ 21 ຕຸລາ 2020.
- ອີງຕາມແຜນປະຕິບັດງານປະຈຳປີ 2020 ຂອງໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ກ່ຽວກັບການຮ່າງແຜນຍຸດທະສາດການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ.

ກອງປະຊຸມວິຊາ ການປຶກສາຫາລືກ່ຽວການປະສານງານ, ການແລກປ່ຽນຂໍ້ມູນຂ່າວສານວຽກການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ເພື່ອເປັນບ່ອນອີງໃນການຮ່າງແຜນຍຸດທະສາດການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ 2021-2025 ໂດຍການເປັນປະທານ ຂອງທ່ານ ບຸນເພັງ ສີສະຫວັດ ຮອງຫົວໜ້າຫ້ອງການ ຄຊກລ, ມີຜູ້ແທນເຂົ້າຮ່ວມໃນກອງປະຊຸມຄັ້ງນີ້ມີ: ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ຫ້ອງການ ຄຊກລ; ໜ່ວຍງານຖານຂໍ້ມູນ ຫ້ອງການ ຄຊກລ; ກົມປິ່ນປົວ; ຫ້ອງການປະກັນສຸຂະພາບແຫ່ງຊາດ; ສູນການແພດຟື້ນຟູໜ້າທີ່ການ; ກົມແຜນການ ແລະ ການຮ່ວມມືສາກົນ ກະຊວງ ຮສສ ແລະ ກົມນະໂຍບາຍຕໍ່ຜູ້ມີຜົນງານ, ພິການ ແລະ ຜູ້ສູງອາຍຸ, ລວມທັງໝົດ 12 ທ່ານ.

### 1. ຈຸດປະສົງ

- ກອງປະຊຸມແມ່ນເພື່ອປຶກສາຫາລືກ່ຽວກັບບັນດານິຕິກຳ, ກົດໝາຍ, ແຜນຍຸດທະສາດ ແລະ ແຜນການປະຕິບັດງານຂອງບແຕ່ລະຄະແໜງການ, ປຶກສາຫາລືກ່ຽວກັບການປະສານງານ ການແລກປ່ຽນຂໍ້ມູນຂ່າວສານ ກ່ຽວກັບວຽກງານການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ແລະ ການປຶກສາຫາລື ກ່ຽວກັບການຈັດຕັ້ງປະຕິບັດກອງທຶນປິ່ນປົວຜູ້ຖືກເຄາະຮ້າຍຈາກ ລບຕ.

### 2. ການດຳເນີນກອງປະຊຸມ.

- ນຳສະເໜີ ການເຄື່ອນໄຫວກ່ຽວກັບວຽກງານການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ປະຈຳໄຕມາດ 3 ໂດຍທ່ານ ບຸນຕາວ ຈັນທະວົງສາ ຫົວໜ້າໜ່ວຍງານຍຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ.
- ນຳສະເໜີ ແລະ ປຶກສາຫາລືກ່ຽວກັບການຄຸ້ມຄອງຂໍ້ມູນ ແລະ ການແລກປ່ຽນຂໍ້ມູນຂ່າວສານກັບບັນດາອົງການ ແລະ ບັນດາກະຊວງການ.
- ນຳສະເໜີ ກ່ຽວກັບໂຄງຮ່າງຍຸດທະສາດການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ 2021-2025.
- ປຶກສາຫາລືກ່ຽວກັບນິຕິກຳເຊັ່ນ: ກົດໝາຍ, ແຜນຍຸດທະສາດອື່ນໆ ທີ່ກ່ຽວຂ້ອງກັບການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຈາກ ລບຕ.
- ກອງປະຊຸມໄດ້ປຶກສາຫາລືກ່ຽວກັບການປະຕິບັດກອງທຶນປິ່ນປົວຜູ້ຖືກເຄາະຮ້າຍຈາກ ລບຕ.
- ກອງປະຊຸມໄດ້ສັງລວມຂໍ້ສະເໜີ ແລະ ຂໍທິດຊີ້ນຳຈາກຜູ້ເຂົ້າຮ່ວມກອງປະຊຸມ.
- **ຮູບແບບ:** ນຳສະເໜີ, ປະກອບຄວາມຄິດເຫັນ ແລະ ສະຫຼຸບ.

**3. ຜົນສຳເລັດຂອງກອງປະຊຸມ.**

ກອງປະຊຸມໄດ້ປຶກສາຫາລື ຜັນຂະຫຍາຍຂະຫຍາຍ ແລະ ຮັບຮູ້ ແຜນຍຸດທະສາດກ່ຽວກັບການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ ສຳລັບປີ 2021-2025, ແນວທາງນະໂຍບາຍຂອງພັກ , ແຜນພັດທະນາເສດຖະກິດ-ສັງຄົມຂອງລັດຖະບານໃນແຕ່ລະໄລຍະ, ພ້ອມທັງຜັນຂະຫຍາຍສິດທິຂອງຄົນພິການ ແລະ ກົດໝາຍວ່າດ້ວຍຄົນພິການ, ກ່ຽວກັບການຄຸ້ມຄອງຂໍ້ມູນ ແລະ ກົນໄກການແລກ ປ່ຽນຂໍ້ມູນຂ່າວສານກັບ ບັນດາອົງການ ແລະ ບັນດາກະຊວງການ, ແຜນເຄື່ອນໄຫວປະຈຳໄຕມາດ 4 ແລະ ແຜນປະຈຳປີ 2021. ເຊິ່ງສາມາດ ສັງລວມຜົນສຳເລັດຂອງກອງປະຊຸມໄດ້ດັ່ງນີ້:

- ກອງປະຊຸມໄດ້ຮັບຟັງການນຳສະເໜີ ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ກ່ຽວກັບການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຈາກ ລບຕ ຄວນຈະມີການປັບປຸງໃຫ້ຄ່ອງໂຕຫຼາຍຂື້ນ ໂດຍສະເພາະ ວຽກງານການປະສານງານ ດ້ານຂໍ້ມູນ ແລະ ເປົ້າໝາຍການຊ່ວຍເຫຼືອ ຄວນແທດເໝາະກັບສະພາບເປັນຈິງ;
- ກອງປະຊຸມໄດ້ຍົກໃຫ້ເຫັນ ບົດບາດຄວາມສຳຄັນໃນການຄຸ້ມຄອງຂໍ້ມູນ ວົງຈອນ ຂັ້ນຕອນໃນການຮັບຂໍ້ມູນ ແລະ ວິເຄາະຂໍ້ມູນ ກ່ອນທີ່ຈະປ້ອນຂໍ້ມູນເຂົ້າຖານຂໍ້ມູນແຫ່ງຊາດ ແລະ ທາງຫ້ອງການ ຄຊກລ ພ້ອມທີ່ຈະໃຫ້ຄວາມຊ່ວຍເຫຼືອໃນການຕິດຕັ້ງລະບົບຖານຂໍ້ມູນ ອີມສະມາ ພ້ອມກັບເຝິກອົບຮົມ ໃຫ້ກັບບັນດາອົງການ ແລະ ກະຊວງການ;
- ກອງປະຊຸມເຫັນດີໃຫ້ຈັດຕັ້ງປະຕິບັດປຶກສາຫາລືກັບບັນດາອົງການ ແລະ ກະຊວງການທີ່ກ່ຽວຂ້ອງ ໃນການແລກປ່ຽນຂໍ້ມູນຂ່າວສານໃຫ້ຖືກກັບຂໍ້ເທັດຈິງ ແລະ ວ່ອງໄວທັນການ;
- ກອງປະຊຸມໄດ້ຮຽກຮ້ອງໃຫ້ແຕ່ລະພາກສ່ວນທີ່ກ່ຽວຂ້ອງ ປຶກສາຫາລືແກ້ໄຂ ເອົາໃຈໃສ່ໃນການຈັດຕັ້ງປະຕິບັດວຽກງານຊ່ວຍເຫຼືອຜູ້ຖືກເຄາະຈາກ ລບຕ, ມີການເປີດເຝິກອົບຮົບຄອດການປະສານງານໃຫ້ແຕ່ລະພາກສ່ວນ.
- ສະເໜີ ໃຫ້ຮ່າງສັນຍາ ໃນການໃຫ້ກອງທຶນປິ່ນປົວຢູ່ແຕ່ລະໂຮງໝໍ.
- ກອງປະຊຸມ ສະເໜີໃຫ້ຄົ້ນຄ້ວາພິຈາລະນາ ໃນການໃຊ້ກອງທຶນຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ໂດຍສະເພາະຄົນທີ່ມີກອງທຶນອື່ນແລ້ວ ແຕ່ຢາກໃຫ້ຫັນມາໃຊ້ກອງທຶນຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ.
- ກອງປະຊຸມສະເໜີໃຫ້ແຕ່ລະພາກສ່ວນຮີບຮ້ອນເກັບກຳຂໍ້ມູນສະຕິຖິຄົນພິການ ສົ່ງໃຫ້ຫ້ອງການ ຄຊກລ ເພື່ອປ້ອນຂໍ້ມູນເຂົ້າຖານຂໍ້ມູນແຫ່ງຊາດ.
    - ກອງປະຊຸມໄດ້ເລີ່ມດຳເນີນໃນເວລາ 13:30 ນາທີ ແລະ ປິດລົງໃນເວລາ 15:45 ນາທີ ຂອງ ວັນທີ 26 ຕຸລາ 20202.

ດັ່ງນັ້ນ, ຈຶ່ງໄດ້ສ້າງບັນທຶກການກອງປະຊຸມສະບັບນີ້ຂຶ້ນ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

**ປະທານກອງປະຊຸມ** **ຜູ້ບັນທຶກ**

ບຸນເພັງ ສີສະຫວັດ
Mr.Bounpheng SISAWATH